# ຂໍ້ກຳນົດ ແລະ ເງື່ອນໄຂການໃຊ້ງານ

1 ກົດລະບຽບການໃຊ້ງານ ແລະ ການເປັນສະມາຊິກ

1.1 ຜູ້ໃຊ້ງານບຸກຄົນໝາຍເຖິງ ບຸກຄົນທຳມະດາ, ນິຕິບຸກຄົນ ຫຼື ອົງກອນທຸລະກິດໃດໆ ບໍ່ວ່າຈະມີການຈົດທະບຽນຕາມກົດໝາຍ ຫຼື ບໍ່ກໍ່ຕາມ ບຸກຄົນທຳມະດາ, ນິຕິບຸກຄົນຫຼືອົງກອນທຸລະກິດດັ່ງກ່າວສາມາດ ສະໝັກ ( ລົງທະບຽນ ) ສະມາຊິກໄດ້ ໂດຍຜູ້ໃຊ້ງານຢືນຢັນ ແລະ ຮັບຮອງເຖິງວ່າຕົນມີຄວາມສາມາດໃນການເຮັດນິຕິກຳ ແລະ ມີອຳນາດໃນການຜູກພັນ ກັບຂໍ້ຕົກລົງນີ້

1.2 ສຳລັບເຍົາວະຊົນ ຈະຕ້ອງໄດ້ຮັບການອະນຸຍາດຈາກພໍ່ແມ່ຜູ້ປົກຄອງກ່ອນເລີ່ມຕົ້ນໃຊ້ງານຫຼືສະມັກ (ລົງທະບຽນ ) ສະມາຊິກ ຫາກເລີ່ມໃຊ້ງານແລ້ວ DDOHOME.COM ຖືວ່າເຍົາວະຊົນໄດ້ຮັບຄວາມຍິນຍອມຈາກຜູ້ປົກຄອງແລ້ວ ຫາກເກີດຄວາມເສຍຫາຍໃດໆທີ່ເຍົາວະຊົນໄດ້ໃຊ້ງານໃນເວບໄຊທ DDOHOME.COM ເຍົາວະຊົນຈະຕ້ອງຮັບຜິດແຕ່ພຽງຜູ້ດຽວທາງເວບໄຊທ໌ DDOHOME.COM ບໍ່ມີສ່ວນຮັບຜິດຊອບຕໍ່ຄວາມເສຍຫາຍໃດໆ

1.3 ໃນການສະໝັກສະມາຊິກ ຫຼື ໃຊ້ງານໃດໆ ໃນເວບໄຊທ໌ ຂອງ DDOHOME.COM ຜູ້ໃຊ້ງານຕ້ອງໃຫ້ຂໍ້ມູນລາຍລະອຽດຕ່າງໆ ເຊິ່ງລວມເຖິງຂໍ້ມູນການຕິດຕໍ່ສື່ສານ ຂອງຜູ້ໃຊ້ຕ້ອງຖືກຕາມຄວາມຈິງປັດຈຸບັນ ສະເພາະທີ່ເປັນຂອງຕົນເອງເທົ່ານັ້ນ ພາຍໃນພື້ນທີ່ ທີ່ DDOHOME.COM ໄດ້ຈັດເອົາໄວ້ ຖ້າຫາກມີການປ່ຽນແປງໃດໆ ຂອງຂໍ້ມູນລາຍລະອຽດດັ່ງກ່າວ ຜູ້ໃຊ້ງານມີໜ້າທີ່ແກ້ໄຂປັບປຸງ ໃນບັນຊີສະມາຊິກ ຫຼື ຕາມການປະກາດຕ່າງໆ ຂອງຕົນໃຫ້ຖືກຕ້ອງຄົບຖ້ວນ ຕາມຄວາມຈິງ ແລະ ເປັນປັດຈຸບັນສະເໝີ ຄວາມຮັບຜິດ ຫຼື ຄວາມເສຍຫາຍໃດໆ ( ຫາກມີ ) ໃນສ່ວນນີ້ຜູ້ໃຊ້ງານ ຈະຮັບຜິດຊອບພຽງຜູ້ດຽວ ຂັ້ນຕອນການລົງທະບຽນສະມາຊິກຂອງ DDOHOME.COM ອາດໃຊ້ເທັກໂນໂລຊີ ໃນການກວດສອບ ໂດຍບຸກຄົນທີ 3 ຊຶ່ງລວມເຖິງຂໍ້ມູນທີ່ຈັດກຽມໃວ້ຂອງເວບໄຊທ໌ ສື່ສັງຄົມອອນໄລ ຂອງບຸກຄົນທີ 3 ເພື່ອຈະພະຍາຍາມຮັບຮອງຄຸນສົມບັດຂອງຜູ້ໃຊ້ງານ.

1.4 DDOHOME.COM ເປັນຊື່ຈົດທະບຽນທາງການຄ້າ ແລະ ໄດ້ຮັບການຄຸ້ມຄອງທາງສິດທິຕາມກົດໝາຍພຽງແຕ່ຄົນດຽວ ຫ້າມຜູ້ໃຊ້ງານໃຊ້ຫຼືລະບຸຊື່ DDOHOME.COM ໃນຊື່ສະມາຊິກຫຼືນາມແຝງ ຫຼື ຂໍ້ມູນໃນການປະກາດ ຊຶ່ງອາດເປັນການສ້າງຄວາມເຂົ້າໃຈຜິດຕໍ່ຜູ້ອື່ນວ່າ DDOHOME.COM ມີສ່ວນກ່ຽວຂ້ອງບໍ່ວ່າທາງກົງຫຼືທາງອ້ອມ.

1.5 ຕະຫຼອດໄລຍະຂອງການເປັນສະມາຊິກຂອງ DDOHOME.COM ຫຼື ວ່າການໃຊ້ງານໃນເວບໄຊທ໌ຂອງ DDOHOME.COM ນັ້ນຜູ້ໃຊ້ຕົກລົງວ່າຈະບໍ່ກະທຳໃດໆ ອັນເປັນການຂັດຂ້ອງຕໍ່ກົດໝາຍ, ນິຕິກຳ, ຂໍ້ກຳນົດຕ່າງໆ ຕາມນະໂຍບາຍຂອງ DDOHOME.COM ລວມທັງການທີ່ບໍ່ກະທຳການໃດໆ ຊຶ່ງຖືວ່າເປັນການລະເມີດສິດທິຂອງ DDOHOME.COM ຫຼື ບຸກຄົນອື່ນອາດກໍ່ໃຫ້ເກີດຄວາມເສຍຫາຍຕໍ່ DDOHOME.COM ຫຼືບຸກຄົນອື່ນ.

1.6 ບັນຊີສະມາຊິກ DDOHOME.COM ຕາມຂໍ້ຕົກລົງນີ້ຖືວ່າເປັນຊັບສິນຂອງ DDOHOME.COM ແຕ່ພຽງຜູ້ດຽວຜູ້ໃຊ້ງານໄດ້ຮັບອະນຸຍາດທີ່ຈໍາກັດສະເພາະຜູ້ຖືບັນຊີໃນນາມຕົນເທົ່ານັ້ນ ໂດຍບັນຊີສະມາຊິກບໍ່ສາມາດຖືລວມກັນ ໂອນ, ແລກປ່ຽນ ຫຼື ປ່ຽນແປງໃຫ້ບຸກຄົນອື່ນໄດ້ DDOHOME.COM ຫ້າມຜູ້ໃຊ້ງານຈໍາໜ່າຍ, ໃຫ້ເຊົ່າ, ໃຫ້ຢືມ, ອະນຸຍາດໃຫ້ໃຊ້ ຫຼື ໃຫ້ສິດທິບັນຊີສະມາຊິກ DDOHOME.COM ຂອງຕົນແກ່ບຸກຄົນອື່ນ ບໍ່ວ່າຈະດ້ວຍເຫດຜົນໃດໆ ກໍ່ຕາມ

1.7 ນອກເໜືອຈາກທີ່ກໍານົດໃນຂໍ້ຕົກລົງນີ້ ຜູ້ໃຊ້ງານມີໜ້າທີ່ ແລະ ຄວາມຮັບຜິດຊອບຕາມກົດໝາຍອື່ນໆ ທີ່ໃຊ້ບັງຄັບຊຶ່ງກ່ຽວຂ້ອງກັບການປະກາດ ເຜີຍແຜ່ ໂຄສະນາອະສັງຫາຣິມະຊັບ ໃນເວບໄຊທ໌ຂອງ DDOHOME.COM ຕໍ່ DDOHOME.COM ແລະ ບຸກຄົນອື່ນ ການຍຸດຕິຂໍ້ໂຕ້ແຍ້ງ ແລະ ຂໍ້ຜິດພາດຕ່າງໆ ຕາມຂໍ້ຕົກລົງຢູ່ກັບການພິຈາລະນາ ແລະ ການຕັດສິນຂອງເວບໄຊທ໌ DDOHOME.COM ພຽງແຕ່ຜູ້ດຽວ ໂດຍຫຼັກຈັນຍາບັນໃດໆ ບໍ່ສາມາດນໍາມາໃຊ້ບັງຄັບກັບການບໍລິການທີ່ກ່ຽວຂ້ອງພາຍໃຕ້ຂໍ້ຕົກລົງນີ້.

1.8 ຜູ້ໃຊ້ງານມີໜ້າທີ່ຮັບຜິດຊອບໃນການປົກປັກຮັກສາຄວາມເປັນສ່ວນຕົວບຸກຄົນຫຼືຄວາມລັບ ຊື່ຜູ້ໃຊ້ງານ ແລະ ລະຫັດຜ່ານ ຫາກມີຂໍ້ສົງໄສວ່າມີການເຂົ້າເຖິງບັນຊີສະມາຊິກຂອງຜູ້ໃຊ້ງານ, ຊື່ຂອງຜູ້ໃຊ້ງານ ຫຼື ລະຫັດຜ່ານຂອງຜູ້ໃຊ້ງານໂດຍບໍ່ໄດ້ຮັບອະນຸຍາດ ຜູ້ໃຊ້ງານຕ້ອງແຈ້ງ ຫຼື ຕິດຕໍ່ Admin@DDOHOME.COM ທັນທີ

1.9 ຫາກມີເຫດທີ່ຜູ້ໃຊ້ງານລະເມີດຕໍ່ DDOHOME.COM ຫຼື ບຸກຄົນອື່ນ DDOHOME.COM ຂໍສງວນສິດທິການໃຊ້ງານ ມີສິດພິຈາລະນາພຽງແຕ່ຝ່າຍດຽວໃນການປິດກັ້ນ ການເຂົ້າສູ່ລະບົບຫຼືການລຶບບັນຊີສະມາຊິກຂອງຜູ້ໃຊ້ງານຕະຫຼອດດເວລາບໍ່ວ່າດ້ວຍເຫດຜົນໃດກໍ່ຕາມ ໂດຍບໍ່ມີການບອກກ່າວລ່ວງໜ້າ ແລະ ແຈ້ງໃຫ້ຮູ້ເຖິງເຫດຜົນ ຊຶ່ງຖືເປັນສິດທິຂາດຂອງຜູ້ໃຊ້ງານຕົກລົງຈະບໍ່ຮຽກຮ້ອງຄ່າເສຍຫາຍຈາກ DDOHOME.COM

1.10 DDOHOME.COM ຂໍສະຫງວນສິດທິໃນການໂອນເວບໄຊທ໌ DDOHOME.COM ແລະ ການບໍລິການທຸກປະເພດຂອງ DDOHOME.COM ລວມທັງສິດທິ ແລະ ໜ້າທີ່ຂອງ DDOHOME.COM ບັນຊີແລະຂໍ້ມູນຂອງຜູ້ໃຊ້ງານ ບໍ່ວ່າທັງໝົດຫຼືບາງສ່ວນ ໃຫ້ແກ່ບໍລິສັດໃນເຄືອຂາຍຫຼືບຸກຄົນພາຍນອກ ໂດຍບໍ່ໄດ້ບອກກ່າວລ່ວງໜ້າຫຼືໄດ້ຮັບອະນຸຍາດຈາກຜູ້ໃຊ້ງານ.

## ຂໍ້ສະຫງວນກ່ຽວກັບກິດຈະກຳການຊື້-ຂາຍ

1 ຂໍ້ມູນແລະລາຍລະອຽດຕ່າງໆ ກ່ຽວກັບອະສັງຫາຣິມະຊັບ ທີ່ສະແດງຫຼືປະກົດໃນການປະກາດໃນເວບໄຊທ໌ DDOHOME.COM ນັ້ນໄດ້ຖືກຈັດກຽມຂຶ້ນໂດຍຜູ້ໃຊ້ງານແຕ່ລະຄົນ ຊຶ່ງເປັນເຈົ້າຂອງອະສັງຫາຣິມະຊັບ ແລະ ປະກາດພຽງຝ່າຍດຽວ ດັ່ງນັ້ນ DDOHOME.COM ບໍ່ຮັບຮອງ ບໍ່ຮັບປະກັນ ຫຼື ບໍ່ມີຄວາມຮັບຜິດຊອບຂໍ້ຜູກພັນໃດໆ ຕໍ່ຜູ້ໃຊ້ງານທຸກຝ່າຍ ແລະ ບຸກຄົນພາຍນອກ ບໍ່ວ່າການເຈລະຈາການຕົກລົງຊື້-ຂາຍ ການດຳລົງທຸລະກຳ ການສົ່ງມອບ ການຊຳລະໜີ້ ລວມທັງອະສັງຫາຣິມະຊັບການລົງປະກາດ ຄຸນນະພາບ, ສະພາບ, ຂະໜາດ ແລະ ລາຄາ ຊຶ່ງຜູ້ໃຊ້ງານຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນລະຫວ່າງຜູ້ໃຊ້ງານເອງທັງໝົດ ແລະ ຜູ້ໃຊ້ງານຈະຕົກລົງບໍ່ຮຽກຮ້ອງໃຫ້ DDOHOME.COM ຮັບຜິດຊອບລວມ ຫຼືມີພາລະຜູກພັນທາງກົດໝາຍຫຼືຕາມຂໍ້ຕົກລົງນີ້ ຕໍ່ຄວາມເສຍຫາຍໃດໆ ທີ່ເກີດຂຶ້ນກັບຜູ້ໃຊ້ງານເອງຫຼືຕໍ່ບຸກຄົນພາຍນອກທີ່ກ່ຽວຂ້ອງໃນທຸກກໍລະນີ.

2 ເພື່ອຄວາມປອດໄພ DDOHOME.COM ຈະໃຊ້ຄວາມພະຍາຍາມຢ່າງທີ່ສຸດໃນການຈັດລະບົບໃຫ້ໄດ້ມາດຕະຖານສາກົນ ໃນທຸລະກິດປະເພດບໍລິຫານຈັດການພື້ນທີ່ປະກາດຊື້-ຂາຍອອນໄລ ຊຶ່ງການຈັດລະບົບດັ່ງກ່າວລວມເຖິງການໃຫ້ຂໍ້ມູນການຊ່ວຍເຫຼືອຕ່າງໆ ແກ່ຜູ້ໃຊ້ງານບໍ່ຖືເປັນຂໍ້ຜູກພັນທີ່ເຮັດໃຫ້ DDOHOME.COM ຕ້ອງຮ່ວມຮັບຜິດຫຼືຮັບຜິດແທນແທນບຸກຄົນໃດໆ ເລີຍ ແນວໃດກໍ່ຕາມ ຜູ້ໃຊ້ງານທຸກຝ່າຍຄວນໃຊ້ພິຈາລະນາ ແລະ ລະມັດລະວັງກ່ຽວກັບປະເພດອະສັງຫາຣິມະຊັບໃນເວບໄຊທ໌ ຕົວຢ່າງເຊັ່ນ: ຄວາມຖືກຕ້ອງຫຼືຄວາມເປັນຈິງຂອງຂໍ້ມູນຫຼືລາຍລະອຽດຕ່າງໆ ທີ່ລົງປະກາດ ການເຈລະຈາຕິດຕໍ່ສື່ສານລະຫວ່າງຜູ້ໃຊ້ງານດ້ວຍກັນເອງກ່ອນຕັດສິນໃຈຊື້ຂາຍ ຫຼື ການເຮັດທຸລະກຳໃດໆ.

3. ການລົງໂຄສະນາ Banner  ບໍລິການລົງໂຄສະນາ Banner ເປັນບໍລິການເພື່ອເຂົ້າເຖິງຜູ້ຫາຊື້ອະສັງຫາຣິມະຊັບ ໃຫ້ຜູ້ຫາຊື້ອະສັງຫາຣິມະຊັບໄດ້ພົບເຫັນປະກາດຂອງຜູ້ໃຊ້ງານ ໂດຍຈັດໃຫ້ມີຜູ້ພົບເຫັນປະກາດພາຍໃນກຳນົດໄລຍະເວລາທີ່ລະບຸຕາມແພັດເກດ ຫຼື ຈົນກວ່າຈະຄົບກຳນົດ ເຊັ່ນປະກາດ 30 ວັນ ນັບຕັ້ງແຕ່ສັ່ງຊື້ບໍລິການເປັນຕົ້ນ. ທັ້ງນີ້ບໍລິການການໂຄສະນາ Banner ມີຄ່າບໍລິການດ້ວຍການຊຳລະຜ່ານທາງບັນຊີທະນາຄານ ຫຼື ຊ່ອງທາງການຊຳລະເງິນອື່ນໆ ຕາມທີ່ DDOHOME.COM ກຳນົດ ຕາມອັດຕາທີ່ໄດ້ກຳນົດໄວ້ຜູ້ໃຊ້ງານສັ່ງຊື້ ແລະ ຊຳລະຄ່າບໍລິການລົງໂຄສະນາ Banner ແລະ DDOHOME.COM ຈະແຈ້ງສະຖານະການດຳເນີນງານໃຫ້ຜູ້ໃຊ້ງານຮູ້ໃນລາຍການສະແດງຜົນ ທັງນີ້ຜູ້ໃຊ້ງານບໍ່ສາມາດຍຸຕິການບໍລິການລົງໂຄສະນາ Banner ທີ່ສັ່ງຊື້ໄວ້ແລ້ວ ຈົນກວ່າການດຳເນີນການຈະໝົດໄປ ໜ້າທີ່ຕໍ່ອາຍຸປະກາດຂອງຕົນໃຫ້ຄົບຕາມຈຳນວນວັນທີ່ຊື້ການໂຄສະນາໄວ້.

3,1 ການລົງປະກາດ * ລາຍການຊັບສິນແນະນຳ* ເປັນສິດທິຂອງ DDOHOME.COM ເປັນລາຍການທີ່ມີການເກັບຄ່າບໍລິການຈາກຜູ້ທີ່ມີຈຸດປະສົງໃຫ້ຊັບສິນທີ່ປະກາດ ມີຜູ້ພົບເຫັນເພື່ອຊ່ວຍໃນການເຊົ່າ/ຂາຍ ໄດ້ໄວຂຶ້ນ ສະມາຊິກທ່ານໃດມີຄວາມສົນໃຈສາມາດສອບຖາມໄດ້ທີ່ Admin@DDOHOME.COM

4. ການປ່ຽນແປງນະໂຍບາຍ ນະໂຍບາຍຄວາມເປັນສ່ວນຕົວນີ້ໄວ້ທຳການປັບປຸງລ້າສຸດເມື່ອວັນທີ່ 30 ມິຖຸນາ 2020 ໂດຍ DDOHOME.COM ອາດຈະມີການປ່ຽນແປງ, ປັບປຸງ ຫຼື ເພີ່ມຕື່ມນະໂຍບາຍຄວາມເປັນສ່ວນຕົວນີ້ເປັນຄັ້ງຄາວ ໂດຍຈະມີການແຈ້ງໃຫ້ຊາບເຖິງກັນ ການປ່ຽນແປງນະໂຍບາຍຄວາມເປັນສ່ວນຕົວ ໃນເວບໄຊທ໌ ຫຼື ແອບພິເຄຊັ່ນຂອງ DDOHOME.COM ຕໍ່ໄປຫຼັງຈາການປ່ຽນແປງ, ປັບປຸງຫຼືເພີ່ມເຕີມນະໂຍບາຍດັ່ງກ່າວແລ້ວ ຖືວ່າຜູ້ໃຊ້ງານຢືນຢັນຍອມຮັບ ແລະ ຕົກລົງທີ່ຈະປະຕິບັດສ່ວນທີ່ການປ່ຽນແປງ, ປັບປຸງ ຫຼື ເພີ່ມເຕີມ ທີ່ເຮັດກັບນະໂຍບາຍເປັນສ່ວນຕົວນີ້ ອັນເປັນການສະແດງການເຈຕະນາທີ່ຖອດຖອນບໍ່ໄດ້. ນະໂຍບາຍຄວາມເປັນສ່ວນຕົວນີ້ ອາດມີການປ່ຽນແປງ, ປັບປຸງ ຫຼື ເພີ່ມຕື່ມພາຍຫຼັງຖືເປັນສ່ວນໜຶ່ງຂອງຂໍ້ກຳນົດ ແລະ ເງື່ອນໄຂການໃຊ້ງານທົ່ວໄປ ( “ຂໍ້ຕົກລົງ’’ )

5. ຂໍ້ມູນສຳລັບຕິດຕໍ່ ຫາກມີຂໍ້ສົງໄສໃດກ່ຽວກັບນະໂຍບາຍຄວາມເປັນສ່ວນຕົວນີ້ ຜູ້ໃຊ້ງານສາມາດສອບຖາມໄດ້ Admin@DDOHOME.COM .